**ບັນທຶກການປະຊຸມ ຄັ້ງວັນທີ 01 ກັນຍາ 2007**

- ກ່າວລາຍລະອຽດ ຂອງການປະຊຸມຄັ້ງທີ່ຜ່ານມາໃຫ້ສະມາຊິກໃໝ່ຮັບຊາບ

- ກິດຈະກຳ ມິດຕະພາບ ລາວ-ຍີ່ປຸ່ນ ມີ 2-3 ກິດຈະກຳ ທີ່ຈະນຳມາສະເໜີ ເຊັ່ນ : ງານບຸນປະເພນີ ຂອງ ຍີ່ປຸ່ນ, ໂຮມສເຕ, ..

- ເລື່ອງບໍລິຫານ ສະມາຄົມ ຈະຕ້ອງເຮັດແນວໃດຕໍ່ໄປ ຈຶ່ງຈະດຳເນີນວຽກໃຫ້ມັນມີປະສິດທິພາບຂຶ້ນ

- ອ້າຍທຸມແພງ : ສະມາຊິກຂອງ ສະມາຄົມ ມີຂະແໜງການໃດແດ່ (ຢູ່ກະຊວງ, ອົງການຈັດຕັ້ງສາກົນ,..) ເປັນໄປໄດ້ ຢາກໃຫ້ມີການຮວມຕົວກັນ ເຮັດວຽກເປັນຂະແໜງການ ເຊັ່ນ: ທ່ອງທ່ຽວ, ກະສິກຳ, ..
+ ມີສິ່ງໃດໃໝ່ໆເກີດຂຶ້ນ ທັງຝ່າຍ ລາວ ແລະ ຍີ່ປຸ່ນ, ກໍ່ມີການລາຍງານໃຫ້ສະມາຄົມຮັບຮູ້ ວ່າເຮົາຕັດສິນໃຈຈະເຮັດ ຫລື ເຄື່ອນໄຫວຫຍັງແດ່, ໃນຂະແໜງການໃດ, ..
+ ບອກເລົ່າ ຈຸດປະສົງຂອງສະມາຄົມ ໃຫ້ແກ່ຂະແໜງການທີ່ເຮົາເຮັດວຽກຢູ່ ຮັບຊາບນຳ ຖ້າມີໂອກາດ

- ອ້າຍແກ່ນຈັນ: ປະຊຸມແຕ່ລະເທື່ອ ຂໍໃຫ້ມີ ແຜນການປະຊຸມກ່ອນ, ເວລາປະຊຸມ ກໍ່ໃຫ້ເວົ້າແຕ່ເນື້ອໃນຂອງ ແຜນການປະຊຸມສະເພາະ, ບໍ່ຄວນຟູມເຟືອຍເວລາໃນການເວົ້າເລື່ອງອື່ນຫລາຍເກີນໄປ

- ອ້າຍໄທນ: ເຮັດວຽກກ່ຽວກັບ ທຸລະກິດຂະໜາດນ້ອຍ, ຖ້າມີໃຜສົນໃຈຢາກຈະເວົ້າ ຫລື ຮວມຕົວກັນກ່ຽວກັບເລື່ອງນີ້ ກໍ່ໃຫ້ມາລົມກັນ ແລ້ວຈັດຕັ້ງເປັນກຸ່ມກໍ່ໄດ້

- ອ້າຍໄຊປະຊາ: ໃຊ້ເວັບໄຊທ໌ ເປັນສື່ກາງໃນການປະກອບຄຳຄິດຄຳເຫັນ ພາຍຫລັງການປະຊຸມແຕ່ລະຄັ້ງ

- ໃຫ້ທຸກຄົນ ປະກອບຄຳເຫັນຂອງຕົນ ຜ່ານ ອີ-ເມລ ພາຍໃນໜຶ່ງອາທິດນີ້, ຄະນະຈະຮວບຮວມ ແລ້ວຈະສົ່ງກັບຄືນຫາທຸກຄົນອີກຄັ້ງ (ຄວາມຄິດເຫັນກ່ຽວກັບ ຄວາມຫຍຸ້ງຍາກ, ບັນຫາ ທີ່ຜ່ານມາມີຫຍັງແດ່, ຄວນແກ້ໄຂແນວໃດ ໃນຂອດຂອງການບໍລິຫານ ສະມາຄົມ)

- ກຸ່ມມິດຕະພາບ ລາວ-ຍີ່ປຸ່ນ
+ ມີກຸ່ມ ອົງການຈັດຕັ້ງສາກົນ, ໂຄງການທາງສາຍຕາ ຢູ່ ສູນຟື້ນຟູຄົນພິການ.
ຕ້ອງການຄວາມຊ່ວຍເຫລືອດ້ານ IT, ສອນພາສາຍີ່ປຸ່ນ, ວັດທະນະທຳຍີ່ປຸ່ນ ເພື່ອເຂົາເຈົ້າຈະໄປໃຊ້ຊີວິດຢູ່ ປະເທດຍີ່ປຸ່ນ

+ ອາສາສະໝັກຂອງ ໄຈກ້າ ຕ້ອງການອາສາສະໝັກທີ່ຈະຮັບເປັນ Host Family ໃຫ້ແກ່ຄົນຍີ່ປຸ່ນ ທີ່ຈະມີຂຶ້ນໃນ ເດືອນ 10, 2007 ເປັນເວລາ 1 ອາທິດ ທີ່ ນະຄອນຫລວງວຽງຈັນ (ເອກະສານຄັດຕິດ ຢູ່ກັບ ເອື້ອຍປູ)

+ ການຊອກຫາແຫລ່ງທຶນ ຂອງ ສະມາຄົມ ເຊັ່ນ: ໃນງານບຸນຊ່ວງເຮືອ ເດືອນ 10, ບຸນປະເພນີຍີ່ປຸ່ນ ເດືອນ 11 ທີ່ຈະມີຂຶ້ນຢູ່ ສູນ ITECC (ເອກະສານຄັດຕິດ ຢູ່ກັບ ເອື້ອຍປູ)

- ເອື້ອຍແສງອຳພອນ: ບຸນຊ່ວງເຮືອ ຕ້ອງໄດ້ເຊົ່າສະຖານທີ່ແພງຫລາຍ ຢູ່ JICafe, ອາດຈະບໍ່ເຊົ່າ ແລ້ວສວຍໃຊ້ໂອກາດທີ່ເຮົາຈະໄປຊ່ວຍ ງານບຸນປະເພນີຍີ່ປຸ່ນ ເດືອນ 11 ທີ່ສູນ ITECC ເພື່ອຫາລາຍໄດ້ເຂົ້າສະມາຄົມ, ຖ້າມີໃຜສົນໃຈຢາກເຮັດ ໃຫ້ ເອື້ອຍປູ ນັດ, ແລ້ວມາລົມກັນອີກ ໃນອາທິດໜ້າ)

## ການປະຊຸມປະຈຳເດືອນ ຄັ້ງຕໍ່ໄປ ວັນທີ 06/10/2007, ເວລາ 2:00

ໝອນ ນວນສີວົງ, ນີ້ແມ່ນລາຍຊື່ສະມາຊິກ ຜູ້ທີ່ນ້ອງຕິດຕໍ່ບໍ່ໄດ້, ເພາະເບີໂທລະສັບ ບໍ່ຖືກ ແລະ ງົດໃຊ້ບໍລິການ